

# “ການຊັກຊວນ”ທາງອິນເຕີເນັດ

ນິຍາມ

## “ການຊັກຊວນ”ທາງອິນເຕີເນັດ

“ການຊັກຊວນ”ທາງອິນເຕີເນັດແມ່ນຂັ້ນຕອນການເລີ່ມຕິດຕໍ່ສື່ສານກັບເດັກ ຜ່ານທາງອິນເຕີເນັດ ໂດຍມີຈຸດປະສົງເພື່ອລໍ້ລວງ, ຈູງໃຈ ຫຼື ປຸກປັ່ນໃຫ້ເດັກ ມີສ່ວນຮ່ວມໃນກິດຈະກໍາທາງເພດ.

ກິດຈະກໍາທາງເພດປະກອບດ້ວຍການດໍາເນີນການທີ່ນອກເໜືອຈາກການ ພົບປະກັນທົ່ວໄປກັບຜູ້ເຮັດຜິດກົດໝາຍ, ເຊັ່ນການທາລຸນທາງເພດເດັກຜ່ານ ທາງກ້ອງວິດີໂອທີ່ຕໍ່ກັບອິນເຕີເນັດ ຫຼື ການຜະລິດສິ່ງທີ່ສື່ເຖິງການທາລຸນ ທາງເພດເດັກ ຫຼື ການສ້າງສິ່ງຕ່າງໆທີ່ສື່ທາງເພດດ້ວຍຕົນເອງ.



## ຂອບກົດໝາຍ

ການຊັກຊວນໃຫ້ເດັກມີສ່ວນຮ່ວມໃນກິດຈະກໍາທາງ ເພດແມ່ນສິ່ງທີ່ຜິດກົດໝາຍຕາມທີ່ໄດ້ກໍານົດໄວ້ໃນ ສົນທິສັນຍາລານຊາລອທ໌.

<u>ສົນທິສັນຍາລານຊາລອທ໌</u>ປະກອບດ້ວຍມາດຕາ (23) ວ່າດ້ວຍການຊັກຊວນເດັກ ຫຼື ການສະເໜີພົບກັບເດັກເພື່ອຈຸດປະສົງໃນການຜະ ລິດສິ່ງລາມົກອະນາຈານເດັກ. ນອກຈາກນັ້ນ ສົນທິສັນຍາດັ່ງກ່າວຍັງກໍານົດວ່າການ ເຮັດໃຫ້ເດັກເຊື່ອມເສຍ ຫຼື ການກະທໍາທີ່ເຮັດໃຫ້ເດັກຮູ້ເຫັນການທາລຸນທາງເພດ ຫຼື ກິດຈະກໍາທາງເພດເປັນການກະທໍາຜິດທາງອາຍາ (ມາດຕາ 22).

ນອກຈາກນັ້ນ <u>ສົນທິສັນຍາສະຫະພາບອາຟຣິກາວ່າດ້ວຍອາດຊະຍາກໍາທາງຄອມ ພິວເຕີ ແລະ ການປົກປ້ອງຂໍ້ມູນ</u> (ຍັງບໍ່ມີຜົນບັງຄັບໃຊ້) ກໍານົດວ່າການກະທໍາທີ່ເປັນ ການອໍານວຍຄວາມສະດວກ ຫຼື ໃຫ້ຊ່ອງທາງເຂົ້າເຖິງສິ່ງລາມົກອະນາຈານເດັກແມ່ນ ສິ່ງທີ່ຜິດກົດໝາຍອາຍາ. ເຊິ່ງມາດຕາ (29)(3)(1)(ງ) ນີ້ແມ່ນກວມເຖິງອົງປະກອບຂອງ ການຊັກຊວນເດັກ.

## ຜູ້ເຮັດຜິດກົດໝາຍ ແລະ ວິທີດໍາເນີນການຂອງພວກເຂົາ

- ຜູ້ເຮັດຜິດກົດໝາຍໄດ້ຮັບແຮງຈູງໃຈຫຼັກໆຈາກ**ຄວາມສົນໃຈທາງເພດ**ກັບ ເດັກ **ຫຼື ຈາກຜົນປະໂຫຍດທາງການເງິນ;**
- ຜູ້ເຮັດຜິດກົດໝາຍດໍາເນີນການ**ພຽງລໍາພັງຜູ້ດຽວ** ຫຼື ເປັນສ່ວນໜຶ່ງຂອງ **ເຄືອຂ່າຍ;**
- ຜູ້ເຮັດຜິດກົດໝາຍເລືອກເຫຍື່ອໂດຍການ**ປະເມີນ**ສະພາວະສ່ຽງຂອງ **ເຫຍື່ອດັ່ງກ່າວ** (ຕົວຢ່າງ: ຄວາມໝັ້ນໃຈສູງ, ການຄວບຄຸມຂອງພໍ່ແມ່);
- **ການຕິດຕໍ່ຫາ**ເດັກສ່ວນໃຫຍ່ແລ້ວແມ່ນດໍາເນີນການທາງ**ອິນເຕີເນັດ** ຕົວຢ່າງ: ໃນຫ້ອງສົນທະນາທາງອິນເຕີເນັດ, ເວັບໄຊເກມ ຫຼືສື່ສັງຄົມອິນ ເຕີເນັດ, ແຕ່ນອກນັ້ນຍັງມີ “ການຊັກຊວນ” ແບບອອຟລາຍ ຫຼື ບໍ່ຜ່ານ ອິນເຕີເນັດອີກ;
- “ການຊັກຊວນ” ສ່ວນໃຫຍ່ແລ້ວປະກອບດ້ວຍການສ້າງ**ສາຍສໍາພັນທາງ ອາລົມ**ກັບເດັກເພື່ອໃຫ້ເກີດຄວາມໄວ້ວາງໃຈ;
- ຜູ້ເຮັດຜິດກົດໝາຍຍັງ **“ຊັກຊວນ” ບຸກຄົນອື່ນ**ເປັນຕົ້ນແມ່ນໝູ່ເພື່ອນ, ຄອບຄົວ ແລະ ຊຸມຊົນຂອງເດັກທີ່ເປັນເປົ້າໝາຍໂດຍບໍ່ມີຂອບເຂດ;
- ພຶດຕິກໍາໃນການ**“ການຊັກຊວນ”**ປະກອບດ້ວຍການຕອບສະໜອງ ຄວາມຕ້ອງການຂອງເດັກ ໂດຍການໃຫ້ຄວາມສົນໃຈ ແລະ ຂອງຂວັນ, ການບັງຄັບທາງຈິດໃຈ, ການຈູງໃຈ, ການອ້າງວ່າເປັນການ 'ອົບຮົມທາງເພດ' ແລະ ການເຮັດໃຫ້ເດັກຕາຍໃຈ;
- ຜູ້ເຮັດຜິດກົດໝາຍອາດຈະ**ແອບອ້າງເປັນບຸກຄົນອື່ນເພື່ອ**ຕົວະຍົວະໃຫ້ເດັກ ມີຄວາມສໍາພັນ (ທາງເພດ) ກັບຕົນເອງ;
- ຜູ້ເຮັດຜິດກົດໝາຍຈະຄ່ອຍໆ**ພັດທະນາຄວາມສໍາພັນທາງເພດ**ກັບເດັກທີ່ ເປັນເປົ້າໝາຍ;
- ຜູ້ເຮັດຜິດກົດໝາຍໂດຍທົ່ວໄປຈະໃຊ້**ການແຍກປ່ຽວ, ການປົກປິດຄວາມ ລັບ, ການກ່າວໂທດ**ເພື່ອເຮັດໃຫ້ເດັກມີສ່ວນຮ່ວມ ແລະ ປິດປາກງຽບ.

## ທ່ານສາມາດເຮັດຫຍັງໄດ້ແນ່?

- ຈົ່ງສົ່ງເສີມໃຫ້ມີຂອບກົດໝາຍທີ່ເຂັ້ມແຂງຂຶ້ນ ທີ່ກໍານົດວ່າ"ການຊັກຊວນ" ເດັກທາງອິນເຕີເນັດເພື່ອໃຫ້ມີສ່ວນຮ່ວມໃນກິດຈະກໍາທາງເພດເປັນການກະ ທໍາຜິດທາງອາຍາ;
- ຈົ່ງສົ່ງເສີມໃຫ້ມີແຫຼ່ງຊັບພະຍາກອນທີ່ດີຂຶ້ນສໍາລັບການບັງຄັບໃຊ້ກົດໝາຍ, ເປັນຕົ້ນແມ່ນຄວາມອາດສາມາດ ແລະ ເຄື່ອງມືສະເພາະ ເພື່ອຮັບມືກັບບັນ ຫາ"ການຊັກຊວນ"ທາງອິນເຕີເນັດ;
- ຈົ່ງສົ່ງເສີມ ແລະ ຮ່ວມມືກັບພາກເອກະຊົນ ເປັນຕົ້ນແມ່ນຜູ້ໃຫ້ບໍລິການອິນ ເຕີເນັດ ໃນການຈັດຕັ້ງປະຕິບັດມາດຕະການຕ່າງໆເພື່ອສະໜອງສະພາບ ແວດລ້ອມທາງອິນເຕີເນັດທີ່ມີຄວາມປອດໄພສໍາລັບເດັກ;
- ຈົ່ງສຶກສາອົບຮົມ ແລະ ປູກຈິດສໍານຶກກ່ຽວກັບບັນຫາ “ການຊັກຊວນ”ເດັກ;
- ຈົ່ງດໍາເນີນການສຶກສາຄົ້ນຄວ້າ ແລະ ເກັບກໍາຂໍ້ມູນທີ່ກ່ຽວຂ້ອງເພື່ອຍົກລະ ດັບຄວາມເຂົ້າໃຈກ່ຽວກັບບັນຫາ "ການຊັກຊວນ"ເດັກທາງອິນເຕີເນັດ;
- ຈົ່ງລາຍງານເມື່ອທ່ານຮັບຮູ້ກ່ຽວກັບສະຖານະການວ່າເດັກຄົນໜຶ່ງກໍາລັງ ຖືກຕົກເປັນເປົ້າໝາຍຂອງການ "ຊັກຊວນ" ທາງອິນເຕີເນັດ;
- ຈົ່ງສະໜັບສະໜູນ ແລະ ເບິ່ງແຍງຜູ້ຖືກເຄາະຮ້າຍ.

ເອກະສານຂໍ້ມູນຕົວຈິງທີ່ຊີ້ໃຫ້ເຫັນກ່ຽວກັບການຂູດຮີດທາງເພດເດັກທາງອິນເຕີເນັດ ສະບັບນີ້ໄດ້ຮັບການພັດທະນາໂດຍອົງການ ECPAT ສາກົນ.
ສະໜັບສະໜູນການແປພາສາ ແລະ ການຜະລິດໂດຍອົງການສປຊ ສໍາລັບເດັກ

ecpat unicef unite for children